# ຮັບຮູ້ບ້ານຊົນເຜົ່າ ໃນວັນນະຄະດີຂອງຈີນ

ຄັດຈ້ອນປະຫວັດສາດທີ່ດີງາມຂອງຊົນເຜົ່າ, ຮັບຮູ້ບ້ານຊົນເຜົ່າໃນວັນນະຄະດີຂອງຈີນ. ນັບແຕ່ວັນທີ 21 - 30 ຕຸລາ 2024, ໜັງສືພິມລາຍວັນຫູໜານ ໄດ້ພິມສາລະຄະດີພາຍໃຕ້ຫົວຂໍ້ "ບ້ານຊົນເຜົ່າ ໃນວັນນະຄະດີ - ດອກພິລາເບັ່ງບານ" ໂດຍໄດ້ບັນທຶກຄວາມປ່ຽນແປງອັນໃຫຍ່ຫຼວງຂອງບ້ານຊົນເຜົ່າ, ຊົນເຜົ່າຕ່າງໆຂອງຈີນ ໄດ້ເຕົ້າໂຮມກັນຢ່າງແໜ້ນແຟ້ນປານເມັດໝາກພິລາ ພ້ອມທັງໄດ້ສ້າງບ້ານເມືອງທີ່ສວຍງາມ.

ໜັງສືພິມລາຍວັນຫູໜານ ໄດ້ຄັດຈ້ອນເອົາບົດປະພັນ ທີ່ໄດ້ຮັບລາງວັນ ວັນນະຄະດີໝາວຕຸ້ນ, ລາງວັນວັນນະຄະດີຫຼູຊຸ້ນ ແລະ ລາງວັນຈຸ້ນໝ້າຂອງນັກຂຽນ 8 ທ່ານ ຄື: ທ່ານ ສຽວຢູ, ທ່ານ ສີຈີຈຽ້ນ, ທ່ານ ອາລາຍ, ທ່ານ ຫຼິວລຽງເສິງ, ທ່ານ ປົວຈີ·ຢວນແຢ, ທ່ານ ນາງ ມາຈິ່ນລຽນ, ທ່ານ ອາເຄີຈິວຊື ແລະ ທ່ານ ຈີທົງຈຽ້ນ ພ້ອມທັງໄດ້ແຕ່ງຕັ້ງຄະນະນັກຂ່າວ 8 ຄະນະ ໄປເກັບກຳຂໍ້ມູນ ຢູ່ຕາມບ້ານຊົນເຜົ່າຕ່າງໆຂອງຈີນ ເຊັ່ນ: ເຜົ່າຈ້ວງ, ເຜົ່າເອີເວິນເຄີ, ເຜົ່າຕິເບດ, ເຜົ່າຮາຊາເຄີ, ເຜົ່າມົງໂກນ, ເຜົ່າຮຸຍ, ເຜົ່າຢີ ແລະ ເຜົ່າປ່ຳຍ.

ຈາກບ້ານຂົ້ວໂລກເໜືອ ເມືອງໂມ້ເຫີ ຂອງສາຍພູຕ້າຊິງອ່ານຫຼິງ ຫາເມືອງເກິ່ນເຫີ ທີ່ເປັນເຂດໜາວທີ່ສຸດຂອງຈີນ, ຈາກທົ່ງຫຍ້າອາລູເຄີເອີຊິນ ທີ່ມີທົ່ງຫຍ້າຂຽວອຸ່ມທຸ່ມຫາທະເລສາບ ຊີໄຫກູ້, ຈາກເຂດປົກຄອງຕົນເອງເຜົ່າອຸຍກູ ຊິນຈຽງເໜືອ ທີ່ກວ້າງໃຫຍ່ໄພສານ ຫາບ້ານກົກເຫຼົ່າ ແລະ ບ້ານຕັ້ງຢູ່ແຄມເຫວເລິກຂອງພາກຕາເວັນຕົກຂອງແຂວງເສສວນ, ຈາກເຂດເລິກລັບພາກຕາເວັນຕົກຂອງແຂວງຫູໜານ ຫາເຂດປົກຄອງຕົນເອງເຜົ່າຈ້ວງ ກວາງຊີ. ຜ່ານການເກັບກຳຂໍ້ມູນ ເປັນເວລາ 5 ເດືອນ, ນັກຂ່າວທັງຫຼາຍ ໄດ້ຮັບຮູ້ເຖິງການປ່ຽນແປງແບບໜ້າມືເປັນຫຼັງມືຂອງຊົນເຜົ່າຕ່າງໆ, ຮັບຮູ້ເຖິງຄວາມຟື້ນຟູຂອງວັດທະນະທຳຊົນເຜົ່າ, ຄວາມເຊື່ອງໂຍງເຂົ້າກັນລະຫວ່າງຊົນເຜົ່າຕ່າງໆ ແລະ ຄວາມຊ່ວຍຊູຍູ້ໜູນກັນ ລະຫວ່າງ ນັກປະພັນດ້ານວັນນະຄະດີ ແລະ ບ້ານຊົນເຜົ່າຕ່າງໆ.



ວັນທີ 4 ກໍລະກົດ, ເຮືອນຊົນເຜົ່າຕິເບດແບບດັ້ງເດີມຂອງບ້ານຕ່ານໂປ ຕາແສງຊິງກາງ ນະຄອນມ່ຳເອີຄາງ ກິ່ງແຂວງປົກຄອງຕົນເອງເຜົ່າຕິເບດ-ເຜົ່າຊຽງ ອາປ້າ ແຂວງເສສວນ.



ວັນທີ 17 ກໍລະກົດ, ໂຮງຮຽນບູຮານມູ້ເລີຍ ທີ່ຕັ້ງຢູ່ບ້ານໄຊ້ຈີໂກ ຕາແສງຢີງເກີປາວ ເມືອງປົກຄອງຕົນເອງເຜົ່າຮາຊາເຄີ ມູ້ເລີຍ ເຂດປົກຄອງຕົນເອງອຸຍກູ ຊິນຈຽງ.



ວັນທີ 5 ມິຖຸນາ, ນາຂັ້ນໄດ ບ້ານລິງວາງປ້າ ຕາແສງຈີສຽງ ເມືອງຊີຈີ ນະຄອນກູ້ຢວນ ເຂດປົກຄອງຕົນເອງເຜົ່າຮຸຍ ໜິງເຊັຍ.



ຕອນຄ່ຳວັນທີ 26 ເມສາ, ຢູ່ເມືອງຢ່ຳງຊົ້ວ ເຂດປົກຄອງຕົນເອງເຜົ່າຈ້ວງ ກວາງຊີ, ນັກສະແດງໄດ້ສະແດງລະຄອນຟ້ອນ "ຫຼິວຊານເຈຍ" ຢູ່ຕາມພູຜາແມ່ນ້ຳຫຼີຈຽງ ນະຄອນກຸ້ຍລິນ.



ວັນທີ 23 ເມສາ, ຢູ່ເມືອງຈິ່ນສິງຈ່ຽງ ເຂດປົກຄອງຕົນເອງເຜົ່າຈ້ວງ ກວາງຊີ, ທ່ານ ເຊ້ຍຊິ້ງລຽງ (ຜູ້ທີ 2 ນັບຈາກເບື້ອງຊ້າຍ) ໄດ້ຮ້ອງເພງຕໍ່ກອນນຳໝູ່ເພື່ອນ.



ວັນທີ 18 ມິຖຸນາ, ຢູ່ "ຈຸດຊາວລ່າເນື້ອ" ອາວລູກູຢາເມືອງເກິ່ນເຫີ ນະຄອນຮູລຸນເບວ ເຂດປົກຄອງຕົນເອງມົງໂກໃນ, ນາງ ປູ້ຕິ່ງເຊຍ ໄດ້ເກືອກວາງ.



ບ້ານຕັ້ງຢູ່ແຄມເຫວຊັນ ຕາແສງກູລີ ເມືອງຈ່າວເຈ ກິ່ງແຂວງປົກຄອງຕົນເອງເຜົ່າຢີ ລຽງຊານ ແຂວງເສສວນ.



ວັນທີ 7 ສິງຫາ ຢູ່ຕາແສງອູຕ້າວສຸ່ຍ ເມືອງຊາງຈີ ມີພູຜາສູງຕັ້ງສະຫງ່າຢູ່ຕົ້ນນ້ຳຂອງແມ່ນ້ຳລີ່ສຸຍ.



ວັນທີ 13 ກໍລະກົດ, ຕາແສງເຜົ່າປ່ຳຍ ຫຼິວເຈ່ຍຜິງເມືອງຊາງຈີ.



ວັນທີ 14 ມິຖຸນາ, ຢູ່ຕາແສງປາແຢນເວີນຕູເອີຊູມູ ເມືອງອາລູເຄີເອີຊິນນະຄອນຊືເຟີງ ເຂດປົກຄອງຕົນເອງມົງໂກໃນ, ຊາວລ້ຽງສັດໄດ້ໄລ່ງົວຍົກຍ້າຍໄປທົ່ງຫຍ້າລະດູຮ້ອນ.